ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ “ຜ-ຟຟລ” ເຂົ້າຮ່ວມງານສຳມະນາ “ບໍລິສັດຈົດທະບຽນພົບປະຜູ້ລົງທຶນ” ປະຈຳປີ 2026

EDL-GEN







ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ “ຜ-ຟຟລ” ເຂົ້າຮ່ວມງານສຳມະນາ “ບໍລິສັດຈົດທະບຽນພົບປະຜູ້ລົງທຶນ” ປະຈຳປີ 2026 ເພື່ອນຳສະເໜີຜົນການດຳເນີນງານປະຈຳປີ 2025 ແລະ ທິດທາງໃນປີ 2026 ເຊິ່ງໄດ້ຈັດຂຶ້ນ ໃນວັນທີ 21 ພຶດສະພາ 2026 ທີ່ ສຳນັກງານໃຫຍ່ ຕະຫລາດຫລັກຊັບລາວ (Lao Securities Exchange) ເຊິ່ງນຳໂດຍ ທ່ານ ສຸກສະຫວາດ ໂສສຸພັນ ຜູ້ອຳນວຍການໃຫ່ຍ ຜ-ຟຟລ ພ້ອມດ້ວຍຄະນະຜູ້ບໍລິຫານ ໄດ້ເຂົ້າຮ່ວມການນຳສະເໜີຜົນການດຳເນີນທຸລະກິດໃນງານຄັ້ງນີ້.

ກິດຈະກຳດັ່ງກ່າວ ຈັດຂຶ້ນເພື່ອເປີດໂອກາດໃຫ້ບັນດາບໍລິສັດຈົດທະບຽນ ໄດ້ພົບປະ ແລະ ແລກປ່ຽນຂໍ້ມູນໂດຍກົງກັບຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ທິດທາງການດຳເນີນງານໃນອະນາຄົດ

ການນຳສະເໜີໃນຄັ້ງນີ້ ໄດ້ຈັດຂຶ້ນໃນຮູບແບບການຖ່າຍທອດສົດ (Live) ທາງເພສ Facebook ຂອງ ຕະຫລາດຫລັກຊັບລາວ ເພື່ອໃຫ້ນັກລົງທຶນ, ຜູ້ຖືຮຸ້ນ ແລະ ມວນຊົນຜູ້ສົນໃຈ ສາມາດຕິດຕາມ ແລະ ສອບຖາມຂໍ້ມູນໄດ້ຢ່າງທົ່ວເຖິງ.

ໃນໂອກາດນີ້, ຜ-ຟຟລ ໄດ້ນຳສະເໜີຂໍ້ມູນກ່ຽວກັບຜົນການດຳເນີນທຸລະກິດ, ການບໍລິຫານໂຄງການໄຟຟ້ານ້ຳຕົກ, ທິດທາງການພັດທະນາດ້ານພະລັງງານ, ພ້ອມທັງວິໄສທັດໃນການຍົກລະດັບການດຳເນີນງານ ດ້ວຍການນຳໃຊ້ເທັກໂນໂລຊີທັນສະໄໝ ເພື່ອສ້າງການເຕີບໂຕຢ່າງຍືນຍົງ ແລະ ເສີມສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ລົງທຶນ.

ນອກຈາກນັ້ນ, ງານສຳມະນາຄັ້ງນີ້ ຍັງໄດ້ຊ່ວຍສົ່ງເສີມບັນຍາກາດການລົງທຶນ ແລະ ການຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບລາວ ໃຫ້ມີຄວາມຄຶກຄື້ນ ແລະ ມີສີສັນຫຼາຍຂຶ້ນ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ